**MMG LXML Sepon**
MMG House, Bourichanh Road
Sisattanak District, PO Box 4486
Vientiane Capital, Lao PDR
T +856 21 268 200
sepon@mmg.com
**www.mmg.com**

# ບົດຂ່າວ:

## ໂຄງການເຊໂປນ ສະໜັບສະໜູນ ແມ່ຍິງ ແລະ ເດັກນ້ອຍ ຢູ່ ໂຮງໝໍ ແຂວງສະຫວັນນະເຂດ

26 ພຶດສະພາ 2015

ໃນວັນທີ 25 ພຶດສະພາ 2015, MMG LXML ເຊໂປນ (LXML) ໄດ້ບໍລິຈາກລົດໂຮງໝໍ ໜຶ່ງຄັນ ແລະ ຕູ້ອົບເດັກເກີດໃໝ່ ສອງເຄື່ອງໃຫ້ແກ່ ໂຮງໝໍແຂວງສະຫວັນນະເຂດ. ຕູ້ອົບເດັກເກີດໃໝ່ຈະຊ່ວຍ ແມ່ທີ່ເກີດລູກກ່ອນກຳນົດ ແລະ ບັນຫາອື່ນໆ. ລົດໂຮງໝໍ ຈະຍົກສູງຄວາມອາດສາມາດຂອງ ແຂວງສະຫວັນນະເຂດ ໃນການຮັບມືກັບ ກໍລະນີສຸກເສີນຕ່າງໆ. ໃນປີ 2014, LXML ໄດ້ບໍລິຈາກອຸປະກອນການແພດ ລວມທັງ ເຄື່ອງດົມຢາສະຫຼົບ, ເຄື່ອງກວດຫົວໃຈ, ເຄື່ອງຄວບຄຸມແກສ໌ ແລະ ອຸປະກອນສຳຄັນອື່ນໆ.

ທ່ານ ຊູເຣັດ ວາດນາກຣາ, ຜູ້ຈັດການໃຫຍ່, MMG LXML ເຊໂປນ ໄດ້ກ່າວວ່າ
"ຂ້າພະເຈົ້າຮູ້ສຶກພາກພູມໃຈຫຼາຍທີ່ໄດ້ສະໜັບສະໜູນ ໂຮງໝໍແຂວງສະຫວັນນະເຂດ, ໂດຍສະເພາະການຊ່ວຍເຫຼືອທີ່ລົງໄປຫາ ແມ່ຍິງ ແລະ ເດັກນ້ອຍໂດຍກົງ. ໂດຍສອດຄ່ອງກັບ ຫຼັກທຳປະຈຳໃຈຂອງພວກເຮົາ, MMG ມີຄວາມມຸ້ງໝັ້ນສູງ ໃນການປົກປ້ອງ ສຸຂະພາບ, ຄວາມປອດໄພ ແລະ ຄວາມຢູ່ດີມີສຸກຂອງ ພະນັກງານພວກເຮົາ ກໍຄື ຮັບປະກັນວ່າຊຸມຊົນໄດ້ຮັບຜົນປະໂຫຍດຈາກ ການດຳເນີນງານໂຄງການຂອງພວກເຮົາ. ພະນັກງານສ່ວນໃຫຍ່ຂອງພວກເຮົາ ມີບ້ານອາໃສຢູ່ ສະຫວັນນະເຂດ. ດັ່ງນັ້ນ ການສະໜັບສະໜູນຄັ້ງນີ້ ສະແດງໃຫ້ເຫັນ ຄວາມມຸ້ງໝັ້ນຂອງພວກເຮົາ ໃນເລື່ອງຄວາມປອດໄພ ແລະ ການບໍລິການສາທາລະນະສຸກ."

"ພວກເຮົາຮູ້ສຶກປິຕິຍິນດີເປັນຢ່າງຍິ່ງ. ອຸປະກອນເຫຼົ່ານີ້ຈະຊ່ວຍ ຍົກສູງຄວາມອາດສາມາດຂອງພວກເຮົາ ໃນການຊ່ວຍເຫຼືອເດັກອ່ອນທີ່ເກີດກ່ອນກຳນົດ. ລົດໂຮງໝໍຈະຊ່ວຍໃນການຮັບມືກັບ ກໍລະນີສຸກເສີນ ແລະ ສ້າງຄວາມອາດສາມາດຂອງໂຮງໝໍ ໃນນາມທີ່ເປັນໂຮງໝໍພາກພື້ນ" ກ່າວໂດຍ ທ່ານ ບຸນມາຍ ຕຸລາບຸດ, ຮັກສາການ ອຳນວຍການ ໂຮງໝໍແຂວງສະຫວັນນະເຂດ.

ໃນການຮ່ວມມືກັບ ກະຊວງສາທາລະນະສຸກ ແລະ UNICEF ທີ່ແນໃສ່ຊ່ວຍຊີວິດຂອງເດັກ, LXML ໄດ້ປະກອບສ່ວນ US$1.4 ລ້ານເຂົ້າໃນການປັບປຸງ ໂພຊະນາການເດັກ ແລະ ແມ່ ຜ່ານແຜນງານ '1000 ວັນ' ທີ່ຈັດຕັ້ງປະຕິບັດເປັນໄລຍະ ສາມປີ ຢູ່ ແຂວງ ສະຫວັນນະເຂດ, ສາລະວັນ ແລະ ອັດຕະປື. ທ່ານນາງ ຮິງເທວ ກາວ, ຜູ້ຕາງໜ້າ UNICEF ຜູ້ໄດ້ໃຫ້ກຽດເຂົ້າຮ່ວມພິທີມອບອຸປະກອນ ຢູ່ ໂຮງໝໍແຂວງສະຫວັນນະເຂດ ໃນຄັ້ງນີ້ ໄດ້ກ່າວວ່າ "ການສະໜັບສະໜູນຂອງ MMG ໂດຍການເປັນຄູ່ຮ່ວມງານ ກັບ ກະຊວງສະາທາລະນະສຸກ ແລະ UNICEF ນີ້ ຈະຊ່ວຍ ຢຸດ ວົງຈອນຄວາມທຸກຍາກ

ແລະ ຄວາມບໍ່ສະເໝີພາບຂອງ ເດັກຮຸ່ນຕໍ່ໄປ ໂດຍການປັບປຸງການເຂົ້າເຖິງ ໂພຊະນາການ, ການຮັກສາສຸຂະພາບ ແລະ ການສຶກສາທີ່ດີ ຂອງພວກເຂົາ.

LXML ໄດ້ສະໜັບສະໜູນຢ່າງຫຼວງຫຼາຍແກ່ ໂຮງໝໍເມືອງວິລະບູລີ ລວມທັງ ການກໍ່ສ້າງ ແລະ ສອ້ມແປງອາຄານ ແລະ ພາກສ່ວນຕ່າງໆໃນໂຮງໝໍ, ລະບົບນ້ຳປະປາ, ລົດໂຮງໝໍ ແລະ ອຸປະກອນການແພດອື່ນໆ.
ໂຄງການເຊໂປນໄດ້ເລີ່ມດຳເນີນງານໃນປີ 2003, LXLM ສະໜັບສະໜູນ ກອງປະຊຸມກ່ຽວກັບສຸຂະພາບເດັກປະຈຳປີ ຜ່ານ ອົງການ Health Frontiers ໃນ ນະຄອນຫຼວງວຽງຈັນ ແລະ ສະໜັບສະໜູນ ໂຄງການ ສຸຂະພາບແມ່ ແລະ ເດັກ ຜ່ານ ສະຫະພັນແມ່ຍິງລາວ ແລະ Burnett Institute ນັບແຕ່

**(ຈົບ)**




*ຮູບ: ທ່ານ ຊູເຣັດ ວາດນາກຣາ, ຜູ້ຈັດການໃຫຍ່ MMG LXML ເຊໂປນ, ມອບ ລົດໂຮງໝໍ ແລະ ຕູ້ອົບເດັກເກີດໃໝ່ ສອງເຄື່ອງ ໃຫ້ແກ່ ທ່ານ ບຸນມາຍ ຕຸລາບຸດ, ຮັກສາການອຳນວຍການ ໂຮງໝໍແຂວງສະຫວັນນະເຂດ ໃນວັນທີ 25 ພຶດສະພາ 2015. ເປັນກຽດເຂົ້າຮ່ວມພິທີມອບໃນຄັ້ງນີ້ ມີ ທ່ານ ສຸພັນ ແກ້ວມີໄຊ, ເຈົ້າແຂວງ ສະຫວັນນະເຂດ; ທ່ານນາງ ຮົງເຫວ ກາວ, ຜູ້ຕາງໜ້າ UNICEF ປະຈຳລາວ; ແລະ ທ່ານ ທຣອຍ ເຮ, ຜູ້ບໍລິຫານສູງສຸດ, MMG.*

**ສຳລັບຂໍ້ມູນເພີ່ມຕື່ມ:**
ສຸຣິດາຮັກ ສາກົນນິຍົມ
ຫົວໜ້າສາຍງານ ການສື່ສານ
ໂທ: 856 21 268 237
ແຟກສ໌: 856 21 268 407
ມືຖື: 856 20 2222 2207
ອີເມວ: souridahak.sakonhninhom@mmg.com ; www.mmg.com